**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 016 / ຈນວ

ວັນທີ: 19 ກັນຍາ 2021

# ຄໍາສັ່ງ

**ເຖິງ: - ຫົວໜ້າກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການ, ອົງການທຽບເທົ່າພະແນກ ນະຄອນຫຼວງວຽງຈັນ;**

**- ເຈົ້າເມືອງ ແລະ ນາຍບ້ານ ທົ່ວນະຄອນຫຼວງວຽງຈັນ;**

**- ພະນັກງານ - ລັດຖະກອນ, ວິສາຫະກິດ, ອົງການຈັດຕັ້ງສາກົນ, ທະຫານ, ຕໍາຫຼວດ, ກໍາມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ເຄື່ອນໄຫວຢູ່ ນະຄອນຫຼວງວຽງຈັນ.**

**ເລື່ອງ: ມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ ແຕ່ວັນທີ 19 - 30 ກັນຍາ 2021.**

- ອີງຕາມ ມາດຕາ 19 - 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1187/ຫສນຍ, ລົງວັນທີ 18 ກັນຍາ 2021;
- ອີງຕາມ ຜົນການປຶກສາຫາລື ຂອງຄະນະສະເພາະກິດນະຄອນຫຼວງວຽງຈັນ ຄັ້ງວັນທີ 18 ກັນຍາ 2021.

ເນື່ອງຈາກວ່າ ໂຕເລກການຕິດເຊື້ອພະຍາດ COVID-19 ໃນຊຸມຊົນ ໄດ້ເພີ່ມຂຶ້ນ ແລະ ກະຈາຍອອກໄປຫຼາຍບ້ານ, ຫຼາຍເມືອງ ຢ່າງວ່ອງໄວ ໂດຍສະເພາະໃນວັນທີ 18 ກັນຍາ 2021, ຊຶ່ງຫຼາຍກວ່າໝູ່ ແມ່ນມາຈາກໂຮງງານ ຢູ່ບ້ານໜອງທາເໜືອ, ເມືອງຈັນທະບູລີ ແລະ ມີຄວາມສ່ຽງສູງ ທີ່ຈະເກີດມີການແຜ່ລະບາດຂອງພະຍາດດັ່ງກ່າວ ຢູ່ນະຄອນຫຼວງວຽງຈັນ ໃນຮອບໃໝ່ ແລະ ຈະຄວບຄຸມໄດ້ຍາກກວ່າທຸກຄັ້ງທີ່ຜ່ານມາ.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຄໍາສັ່ງ:

**1.** ໃຫ້ພະແນກການ, ອົງການທຽບເທົ່າພະແນກ, ອົງການປົກຄອງເມືອງ ແລະ ບ້ານ ຈົ່ງເພີ່ມທະວີການໂຄສະນາເຜີຍແຜ່, ສຶກສາອົບຮົມ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ດ້ວຍຫຼາຍຮູບແບບ ແລະ ວິທີການ ເພື່ອເຮັດໃຫ້ພະນັກງານ - ລັດຖະກອນ, ວິສາຫະກິດ, ອົງການຈັດຕັ້ງສາກົນ, ທະຫານ, ຕໍາຫຼວດ, ກໍາມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ເຄື່ອນໄຫວຢູ່ ນະຄອນຫຼວງວຽງຈັນ ເຫັນໄດ້ໄພອັນຕະລາຍຂອງພະຍາດ COVID-19, ໃຫ້ຮູ້ຈັກປ້ອງກັນພະຍາດນີ້ ດ້ວຍຕົນເອງຢ່າງຖືກຕ້ອງ ແລະ ເຂັ້ມງວດ. ພ້ອມທັງ ເຂົ້າໃຈໃນຄວາມຈໍາເປັນຂອງນະຄອນຫຼວງວຽງຈັນ ທີ່ຕ້ອງປະກາດໃຊ້ມາດຕະການຕ່າງໆ ຕໍ່ການສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ການແຜ່ລະບາດຂອງພະຍາດດັ່ງກ່າວ ເພື່ອປົກປ້ອງ ສຸຂະພາບ ແລະ ຊີວິດ ຂອງປະຊາຊົນ ແລະ ທຸກຄົນຢູ່ ນະຄອນຫຼວງວຽງຈັນ.

**2.** ໃຫ້ພະນັກງານ - ລັດຖະກອນ, ວິສາຫະກິດ, ອົງການຈັດຕັ້ງສາກົນ ຢຸດການມາເຮັດວຽກຢູ່ຫ້ອງການ ແຕ່ວັນທີ 20 ເຖິງ 30 ກັນຍາ 2021, ຍົກເວັ້ນທະຫານ, ຕໍາຫຼວດ, ເຈົ້າໜ້າທີ່ດັບເພີງ, ແພດໝໍ, ພະນັກງານ, ອາສາສະໝັກ ຮັບຜິດຊອບລະບົບການບໍລິການໄຟຟ້າ, ນ້ຳປະປາ, ການສື່ສານ ແລະ ເຮັດວຽກສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ປິ່ນປົວ ຜູ້ຕິດເຊື້ອພະຍາດ. ໃຫ້ບັນດາສໍານັກງານ, ອົງການ, ພະແນກການ, ເມືອງ ແລະ ບ້ານ ທົ່ວນະຄອນຫຼວງວຽງຈັນ ຈັດຕັ້ງ ແລະ ແນະນໍາພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຮັດວຽກທາງລັດຖະການ ຢູ່ເຮືອນ ຫຼື ທີ່ພັກອາໄສ ຜ່ານລະບົບການສື່ສານ ອີເລັກໂຕຣນິກ ແລະ ເຄືອຂ່າຍອິນເຕີເນັດ ເຊັ່ນ: ໂທລະສັບ, ອີເມວ, ສື່ສັງຄົມອອນລາຍ ແລະ ລະບົບກອງປະຊຸມທາງໄກ, ຕ້ອງຈັດຕັ້ງແບ່ງຜູ້ມາປະຈໍາການ ເພື່ອແກ້ໄຂວຽກງານ, ຕ້ອງມີການປ້ອງກັນເວນຍາມສໍານັກງານ, ອົງການ ຢ່າງເປັນປົກກະຕິ ໃຫ້ສາມາດປະສານໄດ້ໃນກໍລະນີມີວຽກຈໍາເປັນ ເພື່ອປ້ອງກັນບໍ່ໃຫ້ເກີດເຫດຮ້າຍສ້າງຄວາມເສຍຫາຍຕ່າງໆ ຢ່າງເດັດຂາດ.

**3. ຫ້າມ ປະຊາຊົນ, ພະນັກງານ - ລັດຖະກອນ, ວິສາຫະກິດ, ອົງການຈັດຕັ້ງສາກົນ, ທະຫານ, ຕໍາຫຼວດ, ກໍາມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ເຄື່ອນໄຫວຢູ່ນະຄອນຫຼວງວຽງຈັນ ອອກຈາກເຮືອນ ຫຼື ທີ່ພັກອາໄສ ເດີນທາງໄປມາ ຢູ່ພາຍໃນນະຄອນຫຼວງວຽງຈັນ**, ຍົກເວັ້ນກໍລະນີທີ່ຈໍາເປັນ ເຊັ່ນ: ໄປຊື້ອາຫານ, ຢາປົວພະຍາດ, ໄປໂຮງໝໍ, ໄປປະຕິບັດໜ້າທີ່ ທີ່ລະບຸໄວ້ໃນຂໍ້ທີ 14 ຂອງຄໍາສັ່ງສະບັບນີ້ ແລະ ໄປປະຕິບັດໜ້າທີ່ຕາມການມອບໝາຍຂອງການຈັດຕັ້ງ.

ສໍາລັບ ຜູ້ທີ່ຈໍາເປັນຕ້ອງໄປທໍາການຜະລິດກະສິກໍາ ແມ່ນສາມາດໄປໄດ້ ແຕ່ມອບໃຫ້ອົງການປົກຄອງບ້ານເປັນຜູ້ກວດກາ ແລະ ຄຸ້ມຄອງ ດ້ານຈໍານວນ ແລະ ຂອບເຂດ ຢ່າງຮັດກຸມ ເພື່ອບໍ່ໃຫ້ມີຄວາມສ່ຽງຕໍ່ການລະບາດຂອງພະຍາດ ໂດຍບໍ່ໃຫ້ເກັບຄ່າທໍານຽມ ຫຼື ຄ່າບໍລິການໃດໆ.

ໃຫ້ກໍາລັງ ປກຊ-ປກສ ສົມທົບກັບອົງການປົກຄອງເມືອງ, ບ້ານກ່ຽວຂ້ອງ ຕັ້ງຈຸດກວດກາ, ປ້ອງກັນ ແລະ ລາດຕະເວນຕາມເສັ້ນທາງ ເພື່ອສະກັດກັ້ນ ບໍ່ໃຫ້ຄົນທີ່ບໍ່ໄດ້ຮັບອະນຸຍາດ ເດີນທາງໄປມາໃນ 7 ເມືອງ ຢ່າງເຂັ້ມງວດ ຄື: ເມືອງຈັນທະບູລີ, ເມືອງສີໂຄດຕະບອງ, ເມືອງໄຊເສດຖາ, ເມືອງສີສັດຕະນາກ, ເມືອງໄຊທານີ, ເມືອງຫາດຊາຍຟອງ ແລະ ເມືອງນາຊາຍທອງ. ສໍາລັບ ເມືອງສັງທອງ ແລະ ເມືອງປາກງື່ມ ແມ່ນໃຫ້ສືບຕໍ່ປ້ອງກັນເວນຍາມ ຕາມປົກກະຕິ.

**4.** ຫ້າມບຸກຄົນ ແລະ ພາຫະນະຂົນສົ່ງໂດຍສານ ຢູ່ນະຄອນຫຼວງວຽງຈັນ ເດີນທາງໄປຕ່າງແຂວງ ຫຼື ເຂດທີ່ມີການຕິດເຊື້ອ ຫຼື ເຂດທີ່ມີຄວາມສ່ຽງ ຍົກເວັ້ນແຕ່ໄດ້ຮັບອະນຸຍາດ ຈາກຄະນະສະເພາະກິດ ຂັ້ນສູນກາງ ຫຼື ນະຄອນຫຼວງວຽງຈັນ ຍ້ອນເຫດຜົນຈໍາເປັນ ເຊັ່ນ: ຂົນສົ່ງສິນຄ້າ, ໂຄງການ ແລະ ວຽກງານບູລິມະສິດ ຂອງລັດຖະບານ. ໃຫ້ເຈົ້າໜ້າທີ່ ປກຊ-ປກສ ຕັ້ງດ່ານກວດກາເອກະສານ, ເກັບກໍາຂໍ້ມູນ ແລະ ສະກັດກັ້ນ ບໍ່ໃຫ້ບຸກຄົນທີ່ບໍ່ໄດ້ຮັບອະນຸຍາດ ເດີນທາງໄປຕ່າງແຂວງ ຢ່າງເດັດຂາດ.

**5.** ຫ້າມບຸກຄົນຢູ່ແຂວງ ທີ່ມີການແຜ່ລະບາດໃນຊຸມຊົນ ເດີນທາງເຂົ້າມານະຄອນຫຼວງວຽງຈັນ, ຖ້າຈໍາເປັນຕ້ອງເຂົ້າມາ ຕ້ອງຈໍາກັດບໍລິເວນໃຫ້ຄົບ 14 ວັນ ຢູ່ສູນ ຫຼື ໂຮງແຮມຈໍາກັດບໍລິເວນ ທີ່ຄະນະສະເພາະກິດ ນະຄອນຫຼວງວຽງຈັນ ກໍານົດໄວ້ ແລະ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ດ້ວຍຕົນເອງ, ຖ້າຜູ້ໃດບໍ່ຍິນຍອມເຂົ້າຈໍາກັດບໍລິເວນ ແມ່ນໃຫ້ກັບຄືນເມືອແຂວງຂອງຕົນທັນທີ. ສໍາລັບ ຄົນນະຄອນຫຼວງວຽງຈັນ ທີ່ຍັງຕົກຄ້າງຢູ່ຕ່າງແຂວງ ແມ່ນສາມາດເດີນທາງກັບຄືນມາພູມລໍາເນົາຂອງຕົນໄດ້ ແຕ່ຖ້າມາຈາກແຂວງທີ່ມີການລະບາດໃນຊຸມຊົນ ຕ້ອງໄດ້ຈໍາກັດບໍລິເວນໃຫ້ຄົບ 14 ວັນ ຢູ່ສູນ ຫຼື ໂຮງແຮມຈໍາກັດບໍລິເວນ ທີ່ຄະນະສະເພາະກິດ ນະຄອນຫຼວງວຽງຈັນ ກໍານົດໄວ້ ແລະ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ດ້ວຍຕົນເອງເຊັ່ນກັນ. ໃຫ້ເຈົ້າໜ້າທີ່ ປກຊ-ປກສ ຕັ້ງດ່ານກວດກາເອກະສານ, ເກັບກໍາຂໍ້ມູນ ແລະ ສະກັດກັ້ນ ບໍ່ໃຫ້ບຸກຄົນທີ່ບໍ່ໄດ້ຮັບອະນຸຍາດ ເດີນທາງເຂົ້າມານະຄອນຫຼວງວຽງຈັນ ຢ່າງເດັດຂາດ.

**6.** ຫ້າມຜູ້ທີ່ຕິດເຊື້ອ ແລະ ຜູ້ສໍາຜັດໃກ້ຊິດກັບຜູ້ຕິດເຊື້ອພະຍາດ COVID-19 ປິດອໍາ ຫຼື ຕົວະປະຫວັດການເຄື່ອນໄຫວຂອງຕົນ ແລະ ຫຼົບໜີການເຂົ້າປິ່ນປົວຢູ່ໂຮງໝໍ ຫຼື ສູນຈໍາກັດບໍລິເວນ ຕາມຄໍາສັ່ງຂອງແພດໝໍ ຫຼື ຄະນະສະເພາະກິດ ຢ່າງເດັດຂາດ, ຖ້າສືບຮູ້ວ່າມີການປິດອໍາ ຫຼື ຕົວະ ຫຼື ຫຼົບໜີ ຕ້ອງຖືກປັບໄໝ ແລະ ດໍາເນີນຄະດີຕາມລະບຽບກົດໝາຍ ລວມທັງໃຫ້ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ກໍ່ຂຶ້ນທັງໝົດ ຢ່າງເຂັ້ມງວດ;

**7.** ຫ້າມການຈັດປະຊຸມ, ໂຮມຊຸມນຸມ ແລະ ກິດຈະກຳຕ່າງໆ ເຊັ່ນ: ກິດຈະກຳທາງສາສະໜາ, ງານບຸນປະເພນີ, ງານດອງ ແລະ ຫ້າມການຈັດງານສັງສັນ, ຊຸມແຊວທຸກຮູບແບບ ຢູ່ທຸກສະຖານທີ່. ສຳລັບ ການງັນເຮືອນດີ, ງານຊາປະນາກິດສົບ ແລະ ເຮັດບຸນແຈກທານ ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອພະຍາດ COVID-19 ຕາມຄຳແນະນຳຂອງຄະນະສະເພາະກິດ ສະບັບເລກທີ 4291/ສພກ, ລົງວັນທີ 15 ກັນຍາ 2021 ວາງອອກຢ່າງເຂັ້ມງວດ ເຊັ່ນ: ວັດແທກອຸນຫະພູມ, ຮັກສາໄລຍະຫ່າງຢ່າງໜ້ອຍ 1 ແມັດຂຶ້ນໄປ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼື ນ້ຳຢາຂ້າເຊື້ອ.

**8.** ປິດດ່ານບ້ານໂດນ ເມືອງປາກງື່ມ, ດ່ານທ່າເດື່ອ ເມືອງຫາດຊາຍຟອງ, ດ່ານໜອງດາ ເມືອງສີໂຄດຕະບອງ, ດ່ານໂຄກແຫ່ ເມືອງສັງທອງ ຢ່າງເຂັ້ມງວດ. ສຳລັບ ດ່ານສາກົນຂົວມິດຕະພາບ ລາວ-ໄທ 1 ນະຄອນຫຼວງວຽງຈັນ ແມ່ນປິດການອະນຸຍາດເດີນທາງ ເຂົ້າ-ອອກ ຂອງບຸກຄົນທົ່ວໄປ, ຍົກເວັ້ນ ຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ຂັ້ນສູນກາງ; ສ່ວນພາຫະນະ ຂົນສົ່ງສິນຄ້າ ຂອງຜູ້ປະກອບການດ້ານການຂົນສົ່ງ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ສາມາດເຂົ້າ-ອອກໄດ້, ແຕ່ຕ້ອງປະຕິບັດຕາມຂັ້ນຕອນ ແລະ ຄຳແນະນຳ ຂອງດ່ານສາກົນວາງອອກ ຢ່າງເຂັ້ມງວດ.

**9.** ປິດຮ້ານຄາຣາໂອເກະ, ສະຖານບັນເທີງ, ກາຊີໂນ, ຮ້ານອິນເຕີເນັດຄາເຟ, ຮ້ານເກມ, ໂຮງສາຍຮູບເງົາ, ຮ້ານສະນຸກເກີ, ຮ້ານນວດ, ຮ້ານສະປາ, ຮ້ານຕັດຜົມ, ຮ້ານເສີມສວຍ, ສູນການຄ້າ, ຕະຫຼາດກາງຄືນ, ສວນອາຫານ, ສະຖານທີ່ທ່ອງທ່ຽວ, ເຮືອນພັກ, ຣີສອດ, ຮ້ານກິນ-ດື່ມ, ຮ້ານປະເພດປີ້ງຕ່າງໆ ທີ່ມີການບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການຂາຍເຄື່ອງຊະຊາຍຕາມແຄມທາງເຊັ່ນ: ການຂາຍຫວຍ, ເຄື່ອງຂອງ, ອາຫານ ແລະ ອື່ນໆ.

**10.** ຫ້າມໄປອອກກຳລັງກາຍຢູ່ກາງແຈ້ງ ຕາມສະຖານທີ່ສາທາລະນະຕ່າງໆເຊັ່ນ: ສະໜາມຫຼວງ, ບຶງທາດຫຼວງ, ສວນເຈົ້າອານຸວົງ ແລະ ບ່ອນອື່ນໆ, ປິດສູນກິລາໃນຮົ່ມຕ່າງໆ ເຊັ່ນ: ສູນອອກກຳລັງກາຍ, ເດີ່ນດອກປີກໄກ່, ເດີ່ນບານເຕະ, ເດີ່ນເປຕັງ, ສະໜາມຕີມວຍ, ສະໜາມຕີກ໊ອຟ, ສະລອຍນ້ຳ, ສັງວຽນຕີໄກ່ ແລະ ກິລາປະເພດອື່ນໆ ທີ່ຮ່າງກາຍສຳຜັດກັນ.

**11.** ປິດໂຮງງານຕັດຫຍິບ, ໂຮງງານອື່ນໆ ແລະ ບັນດາໂຄງການໃຫຍ່ ເພື່ອປະເມີນຄວາມສ່ຽງ, ຖ້າຮັບປະກັນໄດ້ວ່າ ບໍ່ມີຄວາມສ່ຽງໃນການແຜ່ລະບາດພະຍາດ COVID-19 ຈຶ່ງພິຈາລະນາອະນຸຍາດໃຫ້ເປີດໂຮງງານຄືນ. ໃຫ້ໂຮງງານທີ່ປິດ ຄຸ້ມຄອງ ແລະ ຊ່ວຍເຫຼືອພະນັກງານ ແລະ ກຳມະກອນຂອງຕົນ ໃນໄລຍະພັກວຽກ.

**12.** ຫ້າມກັກຕຸນ ແລະ ຂຶ້ນລາຄາສິນຄ້າ ທີ່ຈຳເປັນຕໍ່ການກັນການລະບາດ, ການອຸປະໂພກ ແລະ ບໍລິໂພກ ເປັນຕົ້ນຜ້າອັດປາກ-ດັງ, ນ້ຳຢາລ້າງມື, ຢາປົວພະຍາດ, ອຸປະກອນການແພດ, ເຂົ້າ, ອາຫານ, ນ້ຳດື່ມ ແລະ ອື່ນໆ. ໃຫ້ເຈົ້າໜ້າທີ່ກວດກາການຄ້າ ເອົາໃຈໃສ່ເປັນພິເສດ ໃນການຕິດຕາມ ກວດກາ ແລະ ຄຸ້ມຄອງລາຄາສິນຄ້າ, ພ້ອມກັນນັ້ນ ກໍ່ໃຫ້ສົມທົບກັບເຈົ້າໜ້າທີ່ຕຳຫຼວດ ດຳເນີນມາດຕະການປັບໄໝ ແລະ ລົງໂທດ ຕໍ່ຜູ້ລະເມີດຢ່າງເຂັ້ມງວດ.

**13.** ຫ້າມໂຄສະນາ, ເຜີຍແຜ່ ແລະ ສົ່ງຕໍ່ຂໍ້ມູນຂ່າວສານ ທີ່ບໍ່ມີມູນຄວາມຈິງ ໃນຮູບແບບໃດໜຶ່ງ ຜ່ານສື່ຕ່າງໆ ຊຶ່ງເຮັດໃຫ້ມີຄວາມເຂົ້າໃຈຜິດ, ສ້າງຄວາມແຕກຕື່ນ ແລະ ສົ່ງຜົນກະທົບໃນທາງລົບຕໍ່ສັງຄົມ. ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ເອົາໃຈໃສ່ຕິດຕາມ ແລະ ດຳເນີນມາດຕະການຕໍ່ຜູ້ລະເມີດ ຢ່າງເຂັ້ມງວດ.

**14.** ອະນຸຍາດໃຫ້ເປີດການຊື້-ຂາຍ ເຄື່ອງອຸປະໂພກ-ບໍລິໂພກ ດ້ວຍການຈັດຊື້, ຈັດສົ່ງ ແລະ ຮັບເອົາ ທີ່ຮັບປະກັນການປ້ອງກັນການແຜ່ເຊື້ອພະຍາດໄດ້ ແລະ ອະນຸຍາດໃຫ້ເປີດກິດຈະການທີ່ມີຄວາມຈຳເປັນອື່ນໆ ເຊັ່ນ: ທະນາຄານ, ສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ, ໂຮງໝໍ, ຫ້ອງກວດພະຍາດເອກະຊົນ, ຮ້ານຂາຍຢາ, ໜ່ວຍກູ້ໄພ, ກິດຈະການໄປສະນີ, ໂທລະຄົມມະນາຄົມ, ໄຟຟ້າ, ນ້ຳປະປາ, ປ້ຳນ້ຳມັນ ແລະ ການບໍລິການເກັບມ້ຽນຂີ້ເຫຍື້ອ. ຜູ້ໃຫ້ບໍລິການຕ້ອງໄດ້ຮັບວັກຊີນຄົບໂດສ ແລະ ຕ້ອງປະຕິບັດມາດຕະການ ປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອພະຍາດ COVID-19 ທີ່ຄະນະສະເພາະກິດ ວາງອອກຢ່າງເຂັ້ມງວດ.

**15.** ໃຫ້ຄະນະສະເພາະກິດ ນະຄອນຫຼວງວຽງຈັນ, ເມືອງ ເພີ່ມທະວີການປະຕິບັດບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ; ເປັນໃຈກາງໃນການປະສານກັບທຸກພາກສ່ວນທີ່ກ່ຽວຂ້ອງ ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານສະກັດກັ້ນການແຜ່ລະບາດ, ຄວບຄຸມ ແລະ ປິ່ນປົວຜູ້ຕິດເຊື້ອ, ເກັບຕົວຢ່າງກວດຫາເຊື້ອ ແລະ ນຳຕົວຜູ້ສຳຜັດໃກ້ຊິດໄປຈຳກັດບໍລິເວນ ໃຫ້ຄົບຖ້ວນ, ວ່ອງໄວ ແລະ ທັນ

ການ; ສະຫຼຸບຕີລາຄາ ແລະ ລາຍງານສະພາບການຈັດຕັ້ງປະຕິບັດມາດຕະການຕ່າງໆ ທີ່ລັດຖະບານ ແລະ ນະຄອນຫຼວງວຽງຈັນ ວາງອອກ ໃນແຕ່ລະວັນໃຫ້ການນໍານະຄອນຫຼວງວຽງຈັນ ຊາບ ແລະ ຊີ້ນໍາຢ່າງທັນການ.

**16.** ໃຫ້ກອງບັນຊາການ ປກຊ-ປກສ ນະຄອນຫຼວງວຽງຈັນ, ສົມທົບກັບອົງການປົກຄອງເມືອງ ຕິດຕາມ ກວດກາ, ຮັກສາຄວາມສະຫງົບ, ຮັກສາຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ແລະ ຈັດຕັ້ງປະຕິບັດ ມາດຕະການທີ່ໄດ້ກໍານົດໄວ້ ໃນຄໍາສັ່ງສະບັບນີ້ ຢ່າງເຂັ້ມງວດ. ຖ້າມີການລະເມີດ ຕໍ່ຄໍາສັ່ງສະບັບນີ້ ແມ່ນໃຫ້ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ດໍາເນີນມາດຕະການຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

**17.** ມາດຕະການຕໍ່ຜູ້ລະເມີດ: ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດມາດຕະການຂອງຄະນະສະເພາະກິດຂັ້ນສູນກາງ, ນະຄອນຫຼວງວຽງຈັນ ແລະ ຄໍາສັ່ງສະບັບນີ້ ຕ້ອງຖືກປັບໃໝ ຢ່າງເຂັ້ມງວດ ແລະ ເດັດຂາດ ດັ່ງນີ້:

- ບຸກຄົນລະເມີດ: ໃຫ້ປັບໃໝ 3.000.000 ກີບ/ຄົນ/ຄັ້ງ;
- ນິຕິບຸກຄົນລະເມີດ: ໃຫ້ປັບໃໝ 10.000.000 ກີບ/ນິຕິບຸກຄົນ/ຄັ້ງ.

ມອບໃຫ້ກໍາລັງ ປກສ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມກວດກາ ໂດຍເລີ່ມຈາກການປັບໃໝ, ສັ່ງໂຈະ ຫຼື ສັ່ງປິດກິດຈະການ ແລະ ກ້າວໄປເຖິງດໍາເນີນຄະດີຕາມລະບຽບກົດໝາຍ ຕາມກໍລະນີ ແຕ່ເບົາ ຫາ ໜັກ.

**18.** ໃຫ້ພະນັກງານ - ລັດຖະກອນ, ວິສາຫະກິດ, ອົງການຈັດຕັ້ງສາກົນ, ທະຫານ, ຕໍາຫຼວດ, ກໍາມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ເຄື່ອນໄຫວຢູ່ ນະຄອນຫຼວງວຽງຈັນ ຕ້ອງຍົກລະດັບຄວາມມີສະຕິເຄົາລົບ ແລະ ຕື່ນຕົວ ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ຢ່າງເຂັ້ມງວດ, ພ້ອມທັງເປັນຫູເປັນຕາ ຕິດຕາມ ແລະ ລາຍງານ ກໍລະນີພົບເຫັນການລັກລອບເຂົ້າເມືອງ ແລະ ການລະເມີດມາດຕະການຕ່າງໆ ໃຫ້ຄະນະສະເພາະກິດ ລົງກວດກາ ແລະ ແກ້ໄຂ ຢ່າງທັນການ.

**19.** ຄໍາສັ່ງສະບັບນີ້ ມີຜົນບັງຄັບໃຊ້ ເລີ່ມແຕ່ເວລາ 12:00 ໂມງ ຂອງວັນທີ 19 ກັນຍາ ເຖິງເວລາ 24:00 ໂມງ ຂອງວັນທີ 30 ກັນຍາ 2021. ໃນກໍລະນີ ມີການປ່ຽນແປງນະຄອນຫຼວງວຽງຈັນ ຈະແຈ້ງໃຫ້ຊາບຕື່ມ ເປັນແຕ່ລະໄລຍະ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ນະຄອນຫຼວງວຽງຈັນ
ເຈົ້າຄອງນະຄອນ

**ອາດສະພັງທອງ ສີພັນດອນ**